**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 103 / ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 09 / 05 / 22

# ມະຕິ

# ຂອງຄະນະປະຈຳສະພາແຫ່ງຊາດ

## ວ່າດ້ວຍ ການຮັບຮອງມາດຕະການຮັກສາສະຖຽນລະພາບຂອງລາຄານ້ຳມັນເຊື້ອໄຟ ໃນສະພາບລາຄານ້ຳມັນເຊື້ອໄຟເໜັງຕີງຂຶ້ນສູງ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບ ປີ 2015, ມາດຕາ 53 ຂໍ້ 4;
- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 33 ຂໍ້ 2.2.4;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍ ກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 7 ສິງຫາ 2021, ມາດຕາ 2 ຂໍ້ IV ກົດໝາຍວ່າດ້ວຍອາກອນຊົມໃຊ້ ມາດຕາ 15 ຂໍ້ 1;
- ອີງຕາມ ໜັງສືສະເໜີ ຂອງລັດຖະບານ ສະບັບເລກທີ 29/ລບ, ລົງວັນທີ 4 ພຶດສະພາ 2022;
- ອີງຕາມ ການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 7 ພຶດສະພາ 2022.

### ຄະນະປະຈຳສະພາແຫ່ງຊາດ ຕົກລົງ:

**ມາດຕາ 1** ເຫັນດີຮັບຮອງເອົາມາດຕະການຮັກສາສະຖຽນລະພາບ ຂອງລາຄານ້ຳມັນເຊື້ອໄຟ ໃນສະພາບລາຄານ້ຳມັນເຊື້ອໄຟເໜັງຕີງຂຶ້ນສູງ ໂດຍຫຼຸດອັດຕາອາກອນຊົມໃຊ້ນ້ຳມັນເຊື້ອໄຟ ຕາມການສະເໜີຂອງລັດຖະບານ ດັ່ງນີ້:

1. ອັດຕາອາກອນຊົມໃຊ້ ເກັບຈາກນ້ຳມັນກາຊວນ ປັບຈາກ 21% ມາເປັນ 11%;
2. ອັດຕາອາກອນຊົມໃຊ້ ເກັບຈາກນ້ຳມັນແອັດຊັງທຳມະດາ ປັບຈາກ 31% ມາເປັນ 16%.

ການປັບຫຼຸດອັດຕາອາກອນຊົມໃຊ້ຄັ້ງນີ້ ເປັນມາດຕະການຊົ່ວຄາວນຳໃຊ້ໃນໄລຍະ 3 ເດືອນ. ກໍລະນີລາຄານ້ຳມັນເຊື້ອໄຟຕະຫຼາດໂລກປັບຫຼຸດລົງ ໃຫ້ຍົກເລີກມາດຕະການຊົ່ວຄາວ ຕາມມະຕິສະບັບນີ້ ແລ້ວຫັນໄປປະຕິບັດອັດຕາອາກອນຊົມໃຊ້ປົກກະຕິ ຕາມກົດໝາຍ.



CamScanner

**ມາດຕາ 2** ມອບໃຫ້ລັດຖະບານຊີ້ນໍາກະຊວງກ່ຽວຂ້ອງ ຄຸ້ມຄອງການນໍາເຂົ້າ, ລາຄາຂາຍຍ່ອຍ ເພື່ອບໍ່ໃຫ້ມີການສວຍໂອກາດກັກຕຸນ, ສະກັດກັ້ນການຄ້າຂາຍ ເຖື່ອນ, ຮັບປະກັນການແຈກຢາຍຂົນສົ່ງໄປເຂດຫ່າງໄກສອກຫຼີກ.

**ມາດຕາ 3** ການຈັດຕັ້ງປະຕິບັດ

1. ມອບໃຫ້ລັດຖະບານ ຊີ້ນໍາກະຊວງການເງິນ, ກະຊວງອຸດສາຫະກໍາ ແລະ ການຄ້າ, ບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ກໍາມາທິການແຜນການ, ການເງິນ ແລະ ການກວດສອບ, ກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ບັນດາກໍາມາທິການກ່ຽວຂ້ອງຂອງສະພາແຫ່ງຊາດ ດໍາເນີນການຕິດຕາມກວດກາ ແລະ ຊຸກຍູ້ ຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 4** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈໍາສະພາແຫ່ງຊາດ

ປະທານ

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ



CamScanner